(ແບບຕິດຂັດ2)

**<u>ເຖິງ: ບັນດາທ່ານທີ່ຈະເດີນທາງໄປຢ້ຽມຢາມແຂວງມີຢາງິ, ແຂວງຟູກູຊິມະ ແລະ ແຂວງອີວາເຕ</u>**

ວັນທີ 14 ພະຈິກ 2011

ເພື່ອເປັນການປະກອບສ່ວນເຂົ້າໃນການຊ່ວຍເຫລືອຟື້ນຟູເຂດທີ່ຖືກໄພວິບັດທາງພາກຕາເວັນອອກຂອງປະເທດຍີ່ປຸ່ນ, ສໍາຫລັບຄົນຕ່າງປະເທດທີ່ຈະເດີນທາງໄປຢ້ຽມຢາມເຂດໃດຫນຶ່ງຂອງແຂວງມີຢາງິ, ແຂວງຟູກູຊິມະ ຫລືວ່າ ແຂວງອີວາເຕ,

ຖ້າມີເງື່ອນໄຂຄົບຖ້ວນດັ່ງລຸ່ມນີ້ຈະໄດ້ຮັບການຍົກເວັ້ນຄ່າທໍານຽມວີຊາ. ສ່ວນລາຍລະອຽດເພີ້ມຕື່ມຂໍໃຫ້ທ່ານສອບຖາມນໍາສະຖານທູດ ຫລື ສະຖານກົງສູນທີ່ໃກ້ທີ່ສຸດ.

1. ເງື່ອນໄຂໃນການຖືກຍົກເວັ້ນຄ່າທໍານຽມວີຊາ

    (1) ຜູ້ທີ່ຖືກຍົກເວັ້ນຄ່າທໍານຽມວີຊາ

        ກ ໃນກໍລະນີຍື່ນຂໍວີຊາທີ່ບໍ່ແມ່ນວີຊາໄລຍະສັ້ນ

            ຜູ້ທີ່ຈະໄປດໍາລົງຊີວິດຢູ່, ໄປເຮັດວຽກ ຫລື ໄປຮໍາຮຽນຢູ່ເຂດດັ່ງກ່າວ

        ຂ ໃນກໍລະນີຍື່ນຂໍວີຊາໄລຍະສັ້ນ

            ຜູ້ທີ່ຈະໄປຢ້ຽມຢາມເຂດດັ່ງກ່າວ

**<u>ຂໍ້ຄວນລະວັງ: ເຂດດັ່ງກ່າວໝາຍເຖິງ ສາມແຂວງດັ່ງນີ້: ແຂວງມີຢາງິ, ແຂວງຟູກູຊິມະ, ແຂວງອີວາເຕ</u>**

(2) ວິຊາທີ່ຖືກຍົກເວັ້ນຄ່າທຳນຽມວິຊາ

ວິຊາທີ່ຍື່ນຂໍຕັ້ງແຕ່<u>ວັນທີ 15 ພະຈິກ 2011</u> ຫາ ວັນທີ 31 ມີນາ 2015

2. ເອກະສານທີ່ຈຳເປັນ

ນອກຈາກເອກະສານທີ່ຈຳເປັນໃນການຍື່ນຂໍວິຊາທົ່ວໄປແລ້ວ, ກະລຸນາຍື່ນເອກະສານດັ່ງລຸ່ມນີ້:

(1) ໃນກໍລະນີຍື່ນຂໍວິຊາທີ່ບໍ່ແມ່ນວິຊາໄລຍະສັ້ນ

ເອກສານທີ່ສະແດງເຖິງການຢູ່ເຂດດັ່ງກ່າວເຊັ່ນ:ເອກະສານຈາກບ່ອນຢູ່, ຈາກບ່ອນເຮັດວຽກ ຫລື ຈາກບ່ອນຮຽນ

(2) ໃນກໍລະນີຍື່ນຂໍວິຊາໄລຍະສັ້ນ

- ຕາຕະລາງການເຄື່ອນໄຫວ (ແຜນການເຄື່ອນໄຫວ)
- ເອກະສານທີ່ສະແດງເຖິງການໄປຢ້ຽມຢາມເຂດດັ່ງກ່າວ

ອັນໃດໜື່ງໃນນີ້ເຊັ່ນ: ໃບຈອງໂຮງແຮມ, ໃບຈອງປີ້ຍົນ, ໃບຈອງປີ້ເຮືອ, ໃບຈອງປີ້ລົດໄຟ, ໃບຈອງທົວຂອງເຂດດັ່ງກ່າວ, ປີ້ ຫລື ໃບຈອງປີ້ເຂົ້າງານຕ່າງໆທີ່ຈັດຂື້ນຢູ່ເຂດດັ່ງກ່າວ, ບັດເຊີນເຂົ້າຮ່ວມກອງປະຊຸມທີ່ຈັດຂື້ນຢູ່ເຂດດັ່ງກ່າວ ແລະ ອື່ນໆ.

ຂໍ້ຄວນລະວັງ: ຖ້າທ່ານບໍ່ໄດ້ຍື່ນເອກະສານຂ້າງເທິງນີ້ເພື່ອເປັນຫລັກຖານ ແລະ ໃນກໍລະນີສະຖານທູດບໍ່ສາມາດກວດສອບການໄປຍ້ຽມຍາມເຂດດັ່ງກ່າວຂອງທ່ານໄດ້ນັ້ນ, ທ່ານຈະບໍ່ໄດ້ຮັບການຍົກເວັ້ນຄ່າທຳນຽມວີຊາ.